# ສິມທຽບເສດຖະກິດ - ສັງຄົມຂອງບ້ານຫີນບູນເໜືອເມືອງຫີນບູນ ແຂວງຄຳມ່ວນ ກ່ອນ ແລະ ຫຼັງມີການພັດທະນາ

ໂດຍ:

ລັດສະໝີ ແກ້ວຄຳພາວັນ
ວິລະພັນ ມີໃຊດີ
ເສືອ ພະຫຼາ

# ບົດສັດທ້າຍ

ຜ່ານການສຶກສາຄັ້ງນີ້ ແມ່ນເພື່ອແນໃສ່ເກັບກຳຂໍ້ມູນເສດຖະກິດ - ສັງຄົມ ແລະ ສະພາບການດຳລົງຊີວິດ ຂອງປະຊາຊົນພາຍໃນບ້ານຫີນບູນເໜືອ ເມືອງຫີນບູນ ແຂວງຄຳມ່ວນ ເພື່ອປ້ອນຂໍ້ມູນດັ່ງກ່າວນີ້ ໃຫ້ແກ່ອົງການສົ່ງເສີມກະສິກຳປ່າໄມ້ ເພື່ອນຳໃຊ້ເຂົ້າໃນການວາງແຜນພັດທະນາບ້ານຫີນບູນໃຫ້ໄດ້ຮັບຜົນດີ. ການດຳເນີນການສຶກສາຄັ້ງນີ້ ແມ່ນການໄດ້ລົງເກັບຂໍ້ມູນຕົວຈິງ ໂດຍການສຳພາດເອົາ 36% (40 ຄອບຄົວ) ຈາກຈຳນວນຄອບຄົວທັງໝົດ 110 ຄອບຄົວ.

ບ້ານຫີນບູນເໜືອ ມີທັງໝົດ 110 ຫຼັງຄາເຮືອນ ມີແຮງງານລົມບູນ 305 ຄົນ, ຍິງ 205 ຄົນ. ແຮງງານສຳຮອງມີ 128 ຄົນ ຍິງ 56 ຄົນ ແລະ ປະຊາຊົນບ້ານຫີນບູນເໜືອເປັນຄົນລາວລຸ່ມ ແລະ ສ່ວນຫຼາຍເປັນຊົນເຜົ່າຫຍໍ້. ປະຊາຊົນບ້ານຫີນບູນເໜືອໄດ້ຖືກລົບລ້າງການກືກໜັງສື 95%. ທຸກຄົນພາຍໃນບ້ານ ແມ່ນ ນັບຖືສາສະໜາພຸດ. ນອກນັ້ນ ບ້ານຫີນບູນເໜືອ ຍັງມີໂຮງຮຽນໜຶ່ງຫຼັງ ມີ 5 ຫ້ອງຮຽນນັບແຕ່ ປໍ1ເຖິງ ປໍ5 ມີຄູສອນ 4 ຄົນ ແລະ ມີສຸກສາລາ 1 ຫຼັງ ມີແພດປະຈຳ 2 ຄົນ. ການດຳລງຊີວິດຂອງ ປະຊາຊົນ ພາຍໃນ ບ້ານແມ່ນມີຫຼັກສະນະສະອາດຕາມລັກ ອະນາໄມເພາະດື່ມນ້ຳສະອາດ ແລະ ມີວິດຖ່າຍ ທຸກຄອບຄົວ .

ລາຍຮັບຂອງປະຊາຊົນພາຍໃນບ້ານແມ່ນ ຂ້ອນຂ້າງຕ່ຳ ຈາກຜົນການສຳຫຼວດຕົວຈິງ 40 ຄອບຄົວຂອງບ້ານ ແມ່ນມີລາຍຮັບ 9,215,000 ກີບ ຕໍ່ຄອບຄົວໜຶ່ງ ຕໍ່ປີ ແລະ ລາຍຮັບທີ່ຕ່ຳທີ່ສຸດສຳລັບຄອບຄົວຂາດເຂີນ ແມ່ນ 3,325,000 ກີບ ຕໍ່ຄອບຄົວໜຶ່ງຕໍ່ປີ. ລາຍຮັບສ່ວນໃຫຍ່ແມ່ນໄດ້ມາຈາກການປູກຝັງ, ລ້ຽງສັດ ແລະ ການຂາຍເຄື່ອງປ່າຂອງດົງ.

ລາຍຈ່າຍສຳລັບຄອບຄົວຮັ່ງມີ ແມ່ນ 5,488,000 ກີບ ຕໍ່ຄອບຄົວຕໍ່ປີ ແລະ ລາຍຈ່າຍສຳລັບຄອບຄົວທີ່ຂາດເຂີນ ແມ່ນ 2,454,000 ກີບ ຕໍ່ ຄອບຄົວ ຕໍ່ປີ .

ລະດັບການດຳລົງຊີວິດຂອງປະຊາຊົນ ແມ່ນ ຍັງຕ່ຳທັງດ້ານລາຍຮັບ ແລະ ລາຍຈ່າຍຍັງບໍ່ສົມດູນກັນ ທັງດ້ານການສຶກສາ ແລະ ສາທາລະນະສຸກຍັງບໍ່ທັນພໍພຽງຕໍ່ກັບຄວາມຮຽກຮ້ອງຕ້ອງການຂອງປະຊາຊົນພາຍໃນບ້ານໄດ້ເທົ່າທີ່ຄວນ.